ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສຳນັກງານປົກປ້ອງເງິນຝາກ

ເລກທີ 100 /ສປງ

ນະຄອນຫຼວງວຽງຈັນ, ວັນທີ 20 ກັນຍາ 2021

# ໜັງສືແຈ້ງ

**ເຖິງ: ຜູ້ທີ່ຈະມາສົ່ງແບບຟອມສະໝັກງານ ສຳນັກງານປົກປ້ອງເງິນຝາກ.**

**ເລື່ອງ: ເລື່ອນການເປີດ-ປິດຮັບແບບຟອມສະໝັກງານ ສຳນັກງານປົກປ້ອງເງິນຝາກ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສຳນັກງານປົກປ້ອງເງິນຝາກ ສະບັບເລກທີ 68/ທຫລ, ລົງວັນທີ 22 ມັງກອນ 2019;
- ອີງຕາມ ຄຳສັ່ງຂອງ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 016/ນຈວ, ລົງວັນທີ 19 ກັນຍາ 2021;
- ອີງຕາມ ການປະກາດຮັບສະໝັກພະນັກງານ ຂອງສຳນັກງານປົກປ້ອງເງິນຝາກ ເລກທີ 86/ສປງ, ລົງວັນທີ 07 ກັນຍາ 2021

ເນື່ອງຈາກ ໂຕເລກການຕິດເຊື້ອພະຍາດ COVID-19 ໃນຊຸມຊົນ ໄດ້ເພີ່ມຂຶ້ນ ແລະ ກະຈາຍອອກໄປຫຼາຍບ້ານ, ຫຼາຍເມືອງ ຢ່າງວ່ອງໄວ ໂດຍສະເພາະໃນວັນທີ 18 ກັນຍາ 2021 ຊຶ່ງຫຼາຍກວ່າໝູ່ ແມ່ນມາຈາກໂຮງງານ ຢູ່ບ້ານໜອງທາເໜືອ ເມືອງຈັນທະບູລີ ແລະ ມີຄວາມສ່ຽງສູງ ທີ່ຈະເກີດມີການແຜ່ລະບາດ ຂອງພະຍາດດັ່ງກ່າວ ຢູ່ນະຄອນຫຼວງວຽງຈັນ ໃນຮອບໃໝ່ ແລະ ຈະຄວບຄຸມໄດ້ຍາກກວ່າທຸກຄັ້ງທີ່ຜ່ານມາ. ພ້ອມນີ້, ເພື່ອປະຕິບັດເຂັ້ມງວດຕາມ ຄຳສັ່ງຂອງ ເຈົ້າຄອງນະຄອນຫຼວງວຽງຈັນ, ສຳນັກງານປົກປ້ອງເງິນຝາກ ຂໍຖືເປັນກຽດແຈ້ງມາຍັງທ່ານ ຜູ້ທີ່ຈະມາສົ່ງແບບຟອມສະໝັກງານ ສຳນັກງານປົກປ້ອງເງິນຝາກ ຊາບກ່ຽວກັບການເລື່ອນການເປີດ-ປິດຮັບແບບຟອມສະໝັກງານ ສຳນັກງານປົກປ້ອງເງິນຝາກ ຈາກວັນທີ 20-24 ກັນຍາ 2021 ອອກໄປໂດຍບໍ່ມີກຳນົດ. ພ້ອມນີ້, ໃຫ້ບັນດາທ່ານ ຕິດຕາມມື້ເປີດ-ປິດຮັບແບບຟອມສະໝັກງານ ສຳນັກງານປົກປ້ອງເງິນຝາກ ຜ່ານທາງເວັບໄຊທ໌ ສຳນັກງານປົກປ້ອງເງິນຝາກ (www.dpo.gov.la) ຫຼື ໃຫ້ຕິດຕໍ່ຜູ້ຮັບຜິດຊອບໂດຍກົງ ເບີໂທ: 020 – 2222 3966 ຫຼື 020 – 2814 0433.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ.

ຫົວໜ້າສຳນັກງານປົກປ້ອງເງິນຝາກ

ແສງດາວວີ ວົງຄຳຊາວ